3. ເມືອງສຸຍ
4. ເມືອງຈີມ
5. ເມືອງບານ

**3-ຄ. ເມືອງບໍຣິລັນທະນິຄົມ** ມີເມືອງຂຶ້ນເມືອງດຽວ ຄື ເມືອງປະຊຸມ (ເວລານີ້ ເປັນບ້ານຢູ່ໃກ້ເມືອງປາກຊັນ)

**4-ຄ. ເມືອງຄຳມ່ວນ** ມີເມືອງຂຶ້ນ 4 ເມືອງ ຄື:

1. ເມືອງມະຫາໄຊກອງແກ້ວ
2. ເມືອງຊຸມພອນ (ແກ້ງກອກ)
3. ເມືອງວັງມົນ (ບໍ່ຮູ້ວ່າແມ່ນບ່ອນໃດ)
4. ເມືອງຫາງ (ບໍ່ຮູ້ວ່າແມ່ນບ່ອນໃດ ແຕ່ເຊື່ອວ່າ ຄົງຢູ່ທາງຕາເວັນອອກກ້ຳເໜືອຂອງເມືອງເຊບັ້ງໄຟ)

**5-ຄ. ເມືອງມຸກດາຫານ** ມີເມືອງຂຶ້ນຢູ່ 2 ເມືອງ ຄື:

1. ເມືອງພາລຸກາກອນພູມ (ແຕ່ກ່ອນຊື່ບ້ານທ່າຊາຍ ເວລານີ້ຍຸບແລ້ວ)
2. ເມືອງໜອງສູງ (ເວລານີ້ ເປັນຕາແສງຂຶ້ນຕໍ່ອຳເພີສະອີ ຈັງຫວັດນະຄອນພະນົມ)

**6-ຄ. ເມືອງນະຄອນພະນົມ** ມີເມືອງຂຶ້ນ 5 ເມືອງ ຄື:

1. ເມືອງວັງ (ບໍ່ຮູ້ວ່າແມ່ນເມືອງໃດ)
2. ເມືອງເຣນູນະຄອນ (ເວລານີ້ ຂຶ້ນກັບຈັງຫວັດນະຄອນພະນົມ)
3. ເມືອງຣາມຣາດ (ເວລານີ້ ເປັນຕາແສງ ຢູ່ໃນເຂດອຳເພີທາອຸເທນ)
4. ເມືອງອາດສາມາດ (ເວລານີ້ ເປັນຕາແສງ ຢູ່ໃນເຂດອຳເພີນະຄອນພະນົມ)
5. ເມືອງອາກາດອຳນວຍ (ເວລານີ້ ເປັນອຳເພີຂຶ້ນກັບຈັງຫວັດສະກົນນະຄອນ)

**7-ຄ. ເມືອງສະກົນນະຄອນ** ມີເມືອງຂຶ້ນ 7 ເມືອງ ຄື:

1. ເມືອງກຸສຸມານມົນທົບ (ດຽວນີ້ເປັນອຳເພີ ຂຶ້ນຈັງຫວັດສະກົນນະຄອນ)
2. ເມືອງພັນຣະນານິຄົມ (ດຽວນີ້ເປັນອຳເພີ ຂຶ້ນຈັງຫວັດສະກົນນະຄອນ)
3. ເມືອງວາຣິຊພູມ (ດຽວນີ້ເປັນອຳເພີ ຂຶ້ນຈັງຫວັດສະກົນນະຄອນ)